ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານ ໂພນພະເນົາ ວຽງຈັນ, ສປປລາວ ຕູ້ ປ.ນ 6821, ໂທຣ: (865-21) 451222,451116 ແຟັກ:451117
PHONPHANAO VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ: 183 /ບຊລ

ທີ່ນະຄອນຫຼວງວຽງຈັນ, ວັນທີ: 13 JUL 2023

ຮຽນ: ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ,
ທ່ານ ຜູ້ອໍານວຍການໃຫຍ່ ຂອງຕະຫຼາດຫຼັກຊັບລາວ,
ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ.

ເລື່ອງ: ລາຍງານກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດ ຂອງບໍລິສັດ ປະຈໍາໄຕມາດ 2 ປີ 2023.

- ຂໍ້ຕົກລົງວ່າດ້ວຍການຮັບຮອງບົດແຜນການປັບປຸງ ແລະ ຟື້ນຟູກິດຈະການຂອງບໍລິສັດຊີມັງ ລາວ ມະຫາຊົນ ສະບັບເລກທີ 1958/ກປທ, ລົງວັນທີ 21/4/2022.
- ອີງຕາມແຜນການປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ສະບັບລົງວັນທີ 30/12/2021

ບໍລິສັດ ຊີມັງລາວ ມະຫາຊົນ (ບລຊ) ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບກ່ຽວກັບ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ນັບແຕ່ບໍລິສັດໄດ້ ເຂົ້າສູ່ຂະບວນການຟື້ນກິດຈະການ ເຊິ່ງມີລາຍລະອຽດ ດັ່ງນີ້:

1. ບໍລິສັດ ບຊລ ໄດ້ສະເໜີ ດັດແກ້ໃບອະນຸຍາດລົງທຶນ ເພື່ອຈະປ່ຽນຂອບເຂດທຸລະກິດ, ຊື່ບໍລິສັດ ແລະກໍານົດໄລຍະເວລາຂອງການລົງທຶນແມ່ນຢູ່ໃນຂັ້ນຕອນການຄົ້ນຄວ້າຈາກພາກສ່ວນທີ່ກ່ຽວ ຂ້ອງ.
2. ບໍລິສັດ ບຊລ ກະກຽມແຜນການດັດແປງໂຮງງານໃນໄລຍະເບື້ອງຕົ້ນ ຊຶ່ງໄດ້ເຊັນສັນຍາກັບ ບໍລິສັດ ອອກແບບຫຼາຍແຫ່ງ. ພ້ອມນັ້ນ, ສະຖາບັນການອອກແບບແຂວງຢຸນນານ ໄດ້ສໍາຫຼວດທີ່ຕັ້ງໂຮງ ງານສໍາເລັດແລ້ວ ກໍາລັງດໍາເນີນວຽກການອອກແບບຕາມແຜນການ.
3. ສໍາລັບວຽກງານການຊື້ຮຸ້ນຂອງບໍລິສັດ ຫຼັກຊັບລາວ-ຈີນ ຈໍາກັດ ແລະ ຜູ້ຖືຮຸ້ນລາຍຍ່ອຍ ແມ່ນຢູ່ໃນ ຊ່ວງການກະກຽມການສະເໜີຊື້ຮຸ້ນຄາດວ່າຈະສໍາເລັດພາຍໃນທ້າຍປີ 2023.
4. ຄຽງຄູ່ກັນໄປຕາມໂຄງການກໍ່ສ້າງເຂດສາຖິດເສດຖະກິດອຸດສາຫະກໍາທ່ອງທ່ຽວ ແລະ ວັດທະນະທໍາ ເມືອງວັງວຽງ ທາງບໍລິສັດໄດ້ຕັ້ງໜ້າຜັນຂະຫຍາຍພັດທະນາທຸລະກິດດ້ານຕ່າງໆ, ຍາດເອົາໂອກາດ ການພັດທະນາ ໃຫ້ການພັດທະນາຂອງບໍລິສັດມີລັກສະນະຫຼາກຫຼາຍບຸກໜ້າບືນຕົວກ້າວໄປຂ້າງໜ້າ ເຊັ່ນ:

- ໂຄງການກໍ່ສ້າງອາຄານສຳນັກງານໃຫຍ່ຂອງບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ໄດ້ເລີ່ມ ການກໍ່ສ້າງນັບຕັ້ງແຕ່ເດືອນ ເມສາ ປີ 2023 ມາຮອດປັດຈຸບັນນີ້ການໄດ້ສຳເລັດເປັນພື້ນຖານຕາມແຜນ ການກໍ່ສ້າງແມ່ນຈະສຳເລັດໂຄງສ້າງພາຍໃນເດືອນ 12 ປີ 2023, ມີຄວາມສູງ 21 ຊັ້ນ ແລະ ເນື້ອ ທີ່ນຳໃຊ້ກວມ 18000 ຕາແມັດ.
- ທາງບໍລິສັດໄດ້ສ້າງຕັ້ງບໍລິສັດລູກຂຶ້ນຄື: ບໍລິສັດ ສະໝຸນໄພຈົ່ງເຄີ (ລາວ) ຈຳກັດຜູ້ດຽວ ແລະ ບໍລິສັດ ກໍ່ສ້າງ ພັດທະນາ ຕົວເມືອງລາວ ຈຳກັດຜູ້ດຽວ.

ບໍລິສັດ ສະໝຸນໄພຈົ່ງເຄີ (ລາວ) ຈຳກັດຜູ້ດຽວຈະດຳເນີນທຸລະກິດດ້ານກະສິກຳ, ການປູກຝັງພືດອຸດສາຫະກຳ ແລະ ຢາສະໝຸນໄພ ຖືການສ້າງໂອກາດເຮັດວຽກງານທຳ ແລະ ຊ່ວຍຊາວກະສິກອນຫຼຸດຜ່ອນຄວາມທຸກຍາກເປັນເປົ້າໝາຍ.

ບໍລິສັດ ກໍ່ສ້າງ ພັດທະນາ ຕົວເມືອງລາວ ຈຳກັດຜູ້ດຽວ ຈະດຳເນີນທຸລະກິດດ້ານການລະດົມທຶນ, ການລົງທຶນ, ການພັດທະນາ, ການກໍ່ສ້າງ, ການຄຸ້ມຄອງການດຳເນີນທຸລະກິດ ດ້ານພື້ນຖານໂຄງລ່າງ ຕົວເມືອງ ແລະ ໂຄງການສາທາລະນະຂອງລັດ, ການຜະລິດ ແລະ ຈຳໜ່າຍວັດສະດຸກໍ່ສ້າງປະເພດໃໝ່.

5. ສຳລັບອຸປະກອນ ແລະ ເຄື່ອງກົນຈັກທີ່ມີຢູ່ໃນໂຮງງານ ຜ່ານການຄົ້ນຄວ້າຈາກສະພາບໍລິຫານແມ່ນບໍ່ເຫັນດີໃຫ້ຍົກຍ້າຍເຄື່ອງດັ່ງກ່າວອອກໄປຕັ້ງຢູ່ເຂດອຸດສາຫະກຳປັບປຸງໃໝ່ ເນື່ອງຈາກວ່າສະຖານ ທີ່ດັ່ງກ່າວບໍ່ເໝາະສົມ.
6. ບໍລິສັດໄດ້ມີການປັບປຸງໂຄງຮ່າງການຈັດຕັ້ງ, ພະນັກງານ, ລະບົບການຄຸ້ມຄອງພາຍໃນ ຂອງບໍລິສັດ ໃຫ້ເໝາະສົມຕາມແຕ່ລະໜ້າທີ່ຕຳແໜ່ງຂອງວຽກງານເພື່ອເຮັດໃຫ້ວຽກງານໄດ້ຮັບປະສິດທິຜົນກວ່າເກົ່າ.

ດັ່ງນັ້ນ, ຈຶ່ງລາຍງານມັງຍັງທ່ານເພື່ອຊາບ.

ຮຽນດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຜູ້ອຳນວຍການໃຫຍ່ ບໍລິສັດ

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ເນ້ຍເຫຼ້ຍ